# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 2 ພຶສຈິກາ 2008 (11-2-2008)

---

## <u>ພຣະເຢຊູເທົ່ານັ້ນທີ່ເປັນພຣະຜູ້ໂຜດໃຫ້ພົ້ນ</u>

**ຂໍ້ພຣະຄັມພີໃນບົດຮຽນ**: ໂຣມ 9:33-10:15

## ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ

ບົດຮຽນນີ້ຈະຊ່ອຍທ່ານໃຫ້ຮູ້ເຖິງຄວາມຮີບເຮັ່ງເພື່ອໄປບອກຄົນທັງຫລາຍວ່າ ຄວາມລອດພົ້ນມີຢູ່ໃນອົງພຣະເຢຊູຄຣິດເທົ່ານັ້ນ ແລະເພື່ອຊ່ອຍສົ່ງຄົນອອກໄປແບ່ງປັນຂ່າວປະເສີດກັບຄົນທັງຫລາຍທີ່ບໍ່ເຄີຍໄດ້ຍິນເຣື່ອງພຣະເຢຊູ

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ໂປໂລຮູ້ວ່າຄົນທັງຫລາຍມີໃຈຮ້ອນຮົນໃນສາສນາ ແຕ່ຄວາມຮ້ອນຮົນດັ່ງກ່າວນັ້ນຍັງບໍ່ພຽງພໍເທື່ອ. ເຂົາເຈົ້າຈຳເປັນຕ້ອງເຊື່ອໃນອົງພຣະເຢຊູເພື່ອຈະໄດ້ຮັບຄວາມລອດພົ້ນ. ແຕ່ກ່ອນທີ່ຄົນທັງຫລາຍຈະເຊື່ອໃນອົງພຣະເຢຊູ ບັນດາຜູ້ທີ່ເຊື່ອຕ້ອງອອກໄປບອກເຂົາເຈົ້າເຣື່ອງຂ່າວປະເສີດນີ້.

## ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ຄວາມລອດພົ້ນໄດ້ມາທາງຄວາມເຊື່ອໃນອົງພຣະເຢຊູຄຣິດເທົ່ານັ້ນ. ບາງຄົນຄິດວ່າເຂົາຖ້າເຂົາເຈົ້າມີຄວາມຮ້ອນຮົນໃນສາສນາພຽງພໍເຂົາເຈົ້າກໍຈະເຮັດໃຫ້ພຣະເຈົ້າຊົງພໍພຣະທັຍແລະພຣະອົງຈະຊົງຍອມຮັບ ແຕ່ວ່າຄວາມຮ້ອນຮົນໃນສາສນາພຽງຢ່າງດຽວບໍ່ສາມາດຊ່ອຍເຂົາເຈົ້າໃຫ້ລອດພົ້ນໄດ້. ໃນກໍຣະນີດຽວກັນຄຣິສ ຕຽນຫລາຍຄົນກໍມີຄວາມເພິ່ງພໍໃຈເຊັ່ນນັ້ນ. ສ່ວນຫລາຍບັນດາຜູ້ທີ່ເຊື່ອຈະບໍ່ມີຄວາມຮີບເຮັ່ງໃນການປະກາດຂ່າວປະເສີດເຣື່ອງພຣະເຢຊູ.

ໝູ່ບ້ານນຶ່ງໃນປະເທດອິນເດັຽຢູ່ຫ່າງໄກຈາກເມືອງຫລາຍ ຈົນພະນັກງານເກັບພາສີໄປບໍ່ຮອດ. ເມື່ອຂ້າພະເຈົ້າເທສນາເຣື່ອງພຣະເຢຊູຄຣິດຂ້າພະເຈົ້າເຮັດໃຫ້ເຂົາເຈົ້າສັບສົນ. ເຂົາເຈົ້າບໍ່ເຂົ້າໃຈວ່າເປັນຫຍັງເຂົາເຈົ້າຕ້ອງປະຖິ້ມພຣະທັງຫລາຍຂອງເຂົາເຈົ້າຈຶ່ງຈະຮັບເອົາອົງພຣະເຢຊູຄຣິດໄດ້. ແຕ່ເຖິງປານນັ້ນກໍມີຫລາຍຄົນໄດ້ປະຖິ້ມພຣະຕ່າງໆ ຂອງເຂົາເຈົ້າ. ດັ່ງນັ້ນພວກເຮົາຈຶ່ງຮູ້ພາຍຫລັງວ່າ ຂ່າວເຣື່ອງພຣະເຢຊູຄຣິດໄດ້ສືບຕໍ່ແຜ່ ຂຍາຍຖ້າມກາງບັນດາຜູ້ທີ່ເຊື່ອໃໝ່ເຫລົ່ານີ້.

ຫລາຍຄົນໄດ້ຍິນຊື່ຂອງພຣະເຢຊູ ແຕ່ເຂົາເຈົ້າບໍ່ຮູ້ແນ່ນອນວ່າຈະໄດ້ຮັບຄວາມລອດພົ້ນຢ່າງໃດ. ຫລາຍຄົນຄິດວ່າຖ້າເປັນຄົນມີໃຈເມດຕາ ແລະເຄັ່ງໃນສາສນາເຂົາເຈົ້າກໍຈະໄປເຖິງພຣະເຈົ້າໄດ້. ເຂົາເຈົ້າຕ້ອງການຜູ້ທີ່ເຊື່ອ ເພື່ອຊ່ອຍເຂົາເຈົ້າໃຫ້ມີຄວາມເຂົ້າໃຈວ່າ ໂດຍທາງພຣະເຢຊູຄຣິດເທົ່ານັ້ນຈຶ່ງຈະໄດ້ຮັບຄວາມລອດພົ້ນ.

## <u>ສຶກສາພຣະຄັມພີ</u>

**1. <u>ກ້ອນຫີນທີ່ໃຫ້ຕຳສະດຸດ:</u>** ( ໂຣມ 9:33 )

ຫລາຍຄົນເຊື່ອວ່າເຂົາເຈົ້າສາມາດໄປເຖິງພຣະເຈົ້າໄດ້ດ້ວຍຄວາມພຍາຍາມຂອງເຂົາເຈົ້າເອງ. ແນ່ນອນ, ເຂົາເຈົ້າມີເຫດຜົນວ່າ ການເປັນຄົນດີ ຊ່ອຍຄົນທີ່ມີໂອກາດນ້ອຍ ແລະມີສ່ວນຮ່ວມໃນກິຈກັມຕ່າງໆ ຂອງສາສນາ ເຂົາເຈົ້າກໍຈະສາມາດໄປສວັນໄດ້. ຄວາມຄິດເຣື່ອງພຣະຜູ້ໂຜດໃຫ້ພົ້ນຈະເຮັດໃຫ້ຄົນທີ່ເຊື່ອໝັ້ນໃນຕົນເອງບໍ່ພໍໃຈ. ເຂົາເຈົ້າບໍ່ສາມາດຮັບເອົາຂ່າວປະເສີດຂອງພຣະເຢຊູຄຣິດຄືການຕາຍແລະການຄືນມາຈາກຕາຍຂອງພຣະອົງໂດຍທີ່ຕ້ອງຍອມຮັບວ່າຕົນເອງບົກພ່ອງແລະເປັນຄົນບາບ.

ຄົນຢິວໃນສມັຍອົງພຣະເຢຊູເຊື່ອກັນວ່າ ເພາະວ່າເຂົາເຈົ້າແມ່ນຊົນຊາດທີ່ພຣະເຈົ້າຊົງເລືອກ ເຂົາ ເຈົ້າພຽງແຕ່ເຮັດຕາມພິທີທາງສາສນາເທົ່ານັ້ນ. ໂປໂລໄດ້ທ້າທາຍການເຫັນແກ່ຕົວຂອງເຂົາເຈົ້າໂດຍຊີ້ໃຫ້ເຂົາເຫັນວ່າພຣະເຈົ້າຊົງໃຫ້ອົງພຣະເຢຊູເປັນ**ສີລາ**ແຫ່ງຄວາມລອດພົ້ນ. ພຣະເຈົ້າຊົງຕັດວ່າ **ເຮົາໄດ້ວາງ** ຊຶ່ງຊີ້ໃຫ້ເຫັນວ່າແຜນການຊ່ອຍເຫລືອຂອງພຣະເຈົ້າໄດ້ວາງໄວ້ແລ້ວໄດ້ຫລາຍສັຕວັດກ່ອນທີ່ພຣະເຢຊູຈະມາເກີດ.

ໂປໂລໄດ້ຊີ້ໃຫ້ພວກຢິວເບິ່ງໃນພຣະທັມເອຊາຢາ 28:18 ແລະ 8:14. ຂ່າວເຣື່ອງອົງພຣະເຢຊູໄດ້ກ່າວໄວ້ຢ່າງແນ່ນອນ **ດັ່ງມີຄຳຂຽນໄວ້ໃນພຣະຄັມພີ** ໂດຍການຊົງບັນດົນໃຈຈາກພຣະເຈົ້າ. ຜູ້ປະກາດພຣະທັມໄດ້ຊີ້ໃຫ້ເຫັນໄດ້ຫລາຍສັຕວັດຜ່ານມາແລ້ວ ເພິ່ນໄດ້ເຊີນໃຫ້ເພື່ອນຮ່ວມຊາດຂອງເພິ່ນ**ຫລຽວເບິ່ງ!** ແຜນການຂອງພຣະເຈົ້າໄດ້ວາງໄວ້ຕໍ່ໜ້າເຂົາເຈົ້າ.

ພຣະເຈົ້າຊົງວາງພຣະເມຊີອາໄວ້ທີ່ພູຊີໂອນ, ເພື່ອເປັນທີ່ອ້າງອີງແກ່ກຸງເຢລູຊາເລັມ. ພຣະເຈົ້າຊົງ ວາງ**ກ້ອນຫີນ**ໄວ້ເພື່ອໃຫ້ຄົນທັງຫລາຍ**ຕຳສະດຸດ.** ຄົນເຮັບເຣີຖືວ່າການນະມັສການຂອງເຂົາເຈົ້າແມ່ນສ່ວນນຶ່ງຂອງການງານທີ່ເຮັດໃຫ້ພຣະເຈົ້າຊົງພໍພຣະທັຍ. ເຂົາເຈົ້າບໍ່ເຂົ້າໃຈເຖິງຄວາມຈຳເປັນທີ່ຕ້ອງການໄມ້ກາງແຂນ. ຜົນທີ່ຕາມມານັ້ນແມ່ນຫລາຍຄົນບໍ່ຮູ້ຈັກວ່າພຣະອົງເປັນພຣະຜູ້ໂຜດໃຫ້ພົ້ນຂອງເຂົາເຈົ້າ.

ຄຳວ່າ**ຫີນກ້ອນນ້ອຍ**ແລະ**ຫີນກ້ອນໃຫຍ່**ແມ່ນໃຊ້ຄຳສັບທີ່ແຕກຕ່າງກັນ ທ່ານເອຊາຢາ ໄດ້ຊີ້ໃຫ້ເຫັນວ່າປະຊາຊົນຂອງເພິ່ນຈະປະເຊີນກັບພຣະເມຊີອາ. ຄຳທຳອິດໄດ້ເວົ້າເຖິງ**ຫີນ**ກ້ອນນ້ອຍຊຶ່ງສ່ວນຫລາຍແລ້ວພົບຢູ່ເທິງໜ້າດິນຕໍ່າທີ່ຄົນອາດເຕະສະດຸດ. ພຣະເຢຊູຊົງເປັນເໝືອນກ້ອນຫີນທີ່ເຮັດໃຫ້ຄົນຢິວຕຳສະດຸດ. ຄຳທີສອງໄດ້ເວົ້າເຖິງ**ຫີນ**ກ້ອນໃຫຍ່ສຳລັບວາງຮາກຖານ. ອົງພຣະເຢຊູຊົງເປັນຮາກຖານໃນຄວາມສັມພັນກັບພຣະເຈົ້າ. ຫລາຍຄົນໄດ້ຊູນ**ສະດຸດ**ຄວາມສຳຄັນຂອງຄວາມເຊື່ອໃນອົງພຣະຄຣິດ. ການຕາຍຢູ່ເທິງໄມ້ ກາງແຂນເປັນສິ່ງທີ່ໜ້າອັບອາຍ. ບັນດາຜູ້ທີ່ບໍ່ເຊື່ອໄດ້ຕົກຫລຸມພາງເພື່ອໃຫ້ປະຕິເສດການຕາຍຂອງອົງພຣະເຢຊູ. ທ່ານອາດຈະຕອບສນອງພຽງສອງທາງຕໍ່ກ້ອນຫີນຂອງພຣະເຈົ້າຄືອົງພຣະເຢຊູຄຣິດ. ທ່ານອາດຈະສ້າງຊີວິດໃນພຣະອົງ ຫລືບໍ່ກໍຕຳສະດຸດໃນພຣະອົງແລະປະຕິເສດທີ່ຈະເຊື່ອໃນພຣະອົງ.

ອີກປະການນຶ່ງ, ໃຜກໍຕາມທີ່**ເຊື່ອໃນພຣະອົງ**, ຈະບໍ່ລົ້ມລົງຫລືລົ້ມເຫລວ. **ຈະບໍ່ເຮັດໃຫ້ອັບອາຍ** ຊຶ່ງໝາຍຄວາມວ່າຜູ້ທີ່ເຊື່ອຈະໄດ້ຮັບຄວາມຊອບທັມໃນການພິພາກສາ. ເຖິງແມ່ນວ່າບາງສິ່ງຈະບໍ່ດີສເມີໄປສຳລັບບັນດາຜູ້ທີເຊື່ອໃນຊີວິດນີ້, ພວກເຮົາສາມາດສະບາຍໃຈໄດ້ຕາມຄວາມຈິງທີ່ວ່າພວກເຮົາຈະບໍ່ຖືກເຮັດໃຫ້ໄດ້ຮັບຄວາມອັບອາຍເມື່ອພວກເຮົາຢືນຢູ່ຕໍ່ພຣະພັກພຣະເຈົ້າ.

**2. <u>ກ່ຽວກັບຄວາມຮ້ອນຮົນ:</u>** (ໂຣມ 10:1-3)

ໂປໂລຮັກອ້າຍນ້ອງຂອງເພິ່ນຄືຄົນອິສຣາເອນທັງຫມົດ. ຄວາມປາຖນາຂອງເພິ່ນນັ້ນແມ່ນຢາກໃຫ້ເຂົາເຈົ້າໄດ້ຮັບຄວາມລອດພົ້ນ. ພວກເຮົາຄວນສະແດງຄວາມເປັນຫ່ວງຕໍ່ຄົນອື່ນດ້ວຍການອ້ອນວອນເປັນປະຈຳບໍ່ຂາດ. ແຕ່ຢ່າງໃດກໍຕາມ ການອ້ອນວອນຂອງໂປໂລແມ່ນເພື່ອຄວາມລອດພົ້ນຂອງເຂົາເຈົ້າ. ຄວາມຮູ້ ສຶກແລະຄວາມປາຖນາຂອງຄຣິສຕຽນຄວນຈະກ່ຽວຂ້ອງກັບຄົນທີ່ຫລົງເສັຽເພື່ອໃຫ້ເຂົາເຈົ້າໄດ້ຮັບຄວາມລອດພົ້ນ. ຜູ້ທີ່ຕິດຕາມສາສນາ

ຕ່າງໆ ມີຄວາມຮ້ອນຮົນຢ່າງໃຫຍ່ຫລວງສຳລັບພຣະເຈົ້າ. ບັນຫານັ້ນແມ່ນ ການກະທຳເຊັ່ນນັ້ນບໍ່ໄດ້ກ່ຽວຂ້ອງກັບຄວາມຮູ້. ຄົນທັງຫລາຍອາດມີໃຈຮ້ອນຮົນໃນສາສນາປອມ ດັ່ງນັ້ນຄວາມຮ້ອນຮົນຂອງເຂົາເຈົ້າຈຶ່ງເປັນສິ່ງທີ່ໄຮ້ປໂຍດ. ຄວາມຮ້ອນຮົນໃຈຂອງເຂົາເຈົ້າຈຶ່ງບໍ່ສອດຄ່ອງກັບການເປີດເຜີຍຂອງພຣະເຈົ້າທີ່ວ່າພຣະເຢຊູເທົ່ານັ້ນທີ່ເປັນທາງໄປສູ່ຄວາມລອດພົ້ນ.

ຄົນທັງຫລາຍອາດມີຄວາມສັດຊື່ຕໍ່ສາສນາອື່ນໆ ແຕ່ເຂົາເຈົ້າຜິດໄປແລ້ວ. ບັນດາຄຣິສຕຽນທີ່ເຊື່ອໃນສາສນາແຕ່ລະຄົນກໍບໍ່ມີບັນຫາກັບພຣະເຈົ້າ "ເພາະວ່າເຂົາເຈົ້າມີຄວາມສັດຊື່ດີ" ທີ່ຈະຕ້ອງເຂົ້າໃຈໃນຄວາມຜິດຂອງຕົນ. ເຂົາເຈົ້າ**ບໍ່ໄດ້ນັບຖື**ແຜນການຂອງພຣະເຈົ້າທີ່ຊົງປະທານ**ຄວາມຊອບທັມ**ໃຫ້ໂດຍ ທາງອົງພຣະເຢຊູ. ກຸນແຈຂອງຄວາມຫມາຍໃນຖ້ອຍຄຳນີ້ແມ່ນ<u>ຍອມຢູ່ໃຕ້ບັງຄັບ</u>. ຄົນທັງຫລາຍຢາກໄປເຖິງພຣະເຈົ້າດ້ວຍທາງຂອງຕົນເອງ ເພາະເຂົາເຈົ້າບໍ່ຢາກຢູ່ໃຕ້ບັງຄັບຂອງພຣະເຈົ້າ. ເຂົາເຈົ້າພຍາຍາມສ້າງ**ຄວາມຊອບທັມດ້ວຍຕົນເອງ** ແທນທີ່ຈະຍອມຕົວຢູ່ໃຕ້**ຄວາມຊອບທັມຂອງພຣະເຈົ້າ**ຜ່ານທາງພຣະເຢຊູ.

## 3. <u>ພຣະເມຊີອາແຫ່ງຄວາມເຊື່ອ:</u> ( ໂຣມ 10:4-13 )

ຄວາມລອດພົ້ນແມ່ນໄດ້ມາທາງຄວາມເຊື່ອໃນອົງພຣະເຢຊູ. ພວກຢິວເຊື່ອວ່າເຂົາເຈົ້າສາມາດຫາ**ຄວາມຊອບທັມ**ໄດ້ຈາກບັນຍັດຂອງ**ໂມເຊ**. ເຂົາເຈົ້າບໍ່ຮູ້ວ່າຜູ້ທີ່ຖືຕາມບັນຍັດກໍຕ້ອງເຮັດຕາມບັນຍັດ ຊຶ່ງບໍ່ມີຜູ້ໃດສາມາດຮັກສາໄດ້ທຸກຂໍ້. ໂປໂລໄດ້ກ່າວວ່າ ພຣະຄຣິດເປັນຜູ້**ເຮັດໃຫ້ບັນຍັດສົມບູນ**(ພຣະເຢຊູແມ່ນເປົ້າ ໝາຍອັນສຸດທ້າຍຂອງບັນຍັດ). ບັນຍັດເປັນສິ່ງທີ່ຊ່ອຍໃຫ້ເຮົາຮູ້ວ່າເຮົາເປັນຄົນບາບແລະຊີ້ບອກວ່າເຮົາຕ້ອງການພຣະເຢຊູ. ໂປໂລໄດ້ກ່າວວ່າບັນດາຜູ້ທີ່ວາງໃຈເຊື່ອໃນພຣະຄຣິດຈະບໍ່ພຍາຍາມໃຊ້ບັນຍັດເປັນສິ່ງສ້າງຄວາມຊອບທັມໃຫ້ຕົນເອງເພາະວ່າຄວາມຊອບທັມຂອງພຣະເຈົ້າໄດ້ມາໂດຍຄວາມເຊື່ອທາງພຣະເຢຊູ ເທົ່ານັ້ນ. ບາງຄົນຄິດວ່າຈະເຊື່ອໃນສິ່ງໃດກໍໄດ້ຂໍແຕ່ໃຫ້ເຊື່ອແທ້, ແຕ່ວ່າສິ່ງທີ່ສຳຄັນນັ້ນແມ່ນຢູ່ທີ່ວ່າເຮົາເຊື່ອໃນສິ່ງໃດຫລືໃນຜູ້ໃດ. ການເຊື່ອແລະຍອມຮັບເອົາການວາຍພຣະຊົນແລະການຄືນພຣະຊົນຂອງອົງ ພຣະເຢຊູນັ້ນມີຄວາມສຳຄັນຈຳເປັນຕໍ່ຄວາມລອດພົ້ນ.

ຢ່າໃຫ້ຄວາມຄິດຂຶ້ນຢູ່ກັບຫລັກທິສດີທີ່ກ່າວວ່າ **"ໃຜຈະຂຶ້ນເມືອຟ້າ ຫລືຈະລົງໄປໃນເຫວເລິກ ເພື່ອນຳເອົາພຣະຄຣິດມາ."** ໃຈຄວາມທີ່ສຳຄັນນັ້ນແມ່ນ**ຄວາມເຊື່ອ**ທີ່ໂປໂລໄດ້ປະກາດແລະໃຫ້ສາຣະພາບ ດ້ວຍປາກວ່າ**ພຣະເຢຊູຊົງເປັນພຣະຜູ້ເປັນເຈົ້າ**. ແຕ່ການລອດພົ້ນທາງຄວາມເຊື່ອບໍ່ແມ່ນເວົ້າແຕ່ປາກເທົ່າ ນັ້ນ ການສາຣະພາບແມ່ນຕ້ອງ**ອອກຈາກໃຈ**; ທ່ ານຕ້ອງເຊື່ອວ່າ**ພຣະເຈົ້າຊົງບັນດົນໃຫ້ພຣະອົງເປັນຄືນມາຈາກຕາຍ.** ການສາຣະພາບຄວາມເຊື່ອຈະຕ້ອງອອກຈາກໃຈ ແລະຕ້ອງປະຕິດບັດຕໍ່ພຣະເຈົ້ານຳ ແລະຍອມຮັບວ່າພຣະເຢຊູຊົງເປັນພຣະຜູ້ເປັນເຈົ້າ. ຄວາມເຊື່ອແບບນີ້ເທົ່ານັ້ນຈຶ່ງຈະໄດ້ມາຊຶ່ງຄວາມຊອບທັມ. ພຣະເຈົ້າຊົງປະທານຄວາມພົ້ນໃຫ້ທຸກຄົນທີ່**ສາຣະພາບ**ດ້ວຍ**ປາກ**ວ່າພຣະເຢຊູຊົງມີຊີວິດ, ຊົງຕາຍ, ແລະຊົງເປັນຄືນມາຈາກຕາຍ. ຖ້ອຍຄຳສຸດທ້າຍໃນຂໍ້ພຣະຄັມພີແມ່ນກ່າວເຖິງຄວາມລອດພົ້ນເປັນຂອງທຸກຄົນທີ່ໄດ້
**ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າ.**

ຄວາມພົ້ນທາງຄວາມເຊື່ອແມ່ນຍອມຮັບວ່າພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ. ເຮົາບໍ່ພຽງແຕ່ຍອມຮັບຄວາມຈິງແບບເຜີນໆໃນພຣະຄຣິດ ແຕ່ຕ້ອງຍອມຮັບເອົາພຣະອົງເປັນພຣະເຈົ້າແລະເປັນພຣະຜູ້ໂຜດໃຫ້ພົ້ນຂອງເຮົາ. ຜູ້ໃດກໍຕາມທີ່ເຊື່ອແລະສາຣະພາບວ່າພຣະເຢຊູຊົງເປັນພຣະເຈົ້າລາວຈະໄດ້ຮັບ**ຄວາມລອດພົ້ນ.** ຄວາມພົ້ນທາງຄວາມເຊື່ອມີໄວ້ສຳລັບທຸກຄົນບໍ່ວ່າຈະເປັນຄົນຢິວຫລືຄົນກຣີກ. ພຣະເຈົ້າບໍ່ໄດ້ແບ່ງແຍກວ່າເປັນເຊື້ອຊາດໃດ ພຣະອົງຊົງເປັນພຣະເຈົ້າຂອງຄົນທັງປວງ. ພຣະອົງຊົງ**ເຕັມລົ້ນ**ໄປດ້ວຍພຣະພອນຝ່າຍຈິດວິນຍານແລະຈະຊ່ອຍຄົນທັງຫລາຍທີ່**ຮ້ອງອອກພຣະນາມພຣະອົງ**ໃຫ້ລອດພົ້ນ.

**4. <u>ຄວາມສຳຄັນໃນການປະກາດຂ່າວປະເສີດ</u>:** ( ໂຣມ 10:14-15 )

ຂ່າວປະເສີດບໍ່ໄດ້ອອກມາເອງຈາກພາຍໃນຊີວິດຂອງຄົນໃດຄົນນຶ່ງ ເຮົາຈຳເປັນຕ້ອງບອກກັບຄົນທັງຫລາຍ. ໂປໂລໄດ້ເວົ້າເຖິງຄວາມສຳຄັນຂອງການປະກາດຂ່າວປະເສີດດ້ວຍຄຳຖາມສີ່ຂໍ້ດັ່ງນີ້; ນຶ່ງ, ກ່ອນທີ່ຄົນທັງຫລາຍຈະ **ຮ້ອງ**ອອກພຣະນາມພຣະເຢຊູເພື່ອຄວາມພົ້ນ, **ເຂົາເຈົ້າ**ຕ້ອງມີຄວາມເຊື່ອກ່ອນ. ສອງ, ກ່ອນທີ່ເຂົາເຈົ້າຈະ**ມີຄວາມເຊື່ອ**, ເຂົາເຈົ້າຕ້ອງໄດ້ຍິນກ່ອນ. ສາມ, ກ່ອນເຂົາເຈົ້າຈະ**ໄດ້ຍິນ**, ຈະຕ້ອງມີການປະກາດ. ສີ່, ກ່ອນຈະມີການ**ປະກາດ**, ຈະຕ້ອງມີຜູ້ຖືກ**ສົ່ງອອກໄປ**.

ຄົນທັງຫລາຍຈະບໍ່ໄດ້ຮັບຄວາມລອດພົ້ນ ຖ້າບໍ່ມີໃຜໄປບອກແລະບໍ່ໄດ້ຍິນເຣື່ອງຂ່າວປະເສີດ. ໂບດຈະຕ້ອງສົ່ງຄົນອອກໄປບອກຄົນທັງຫລາຍເຣື່ອງຂ່າວປະເສີດແຫ່ງຄວາມລອດພົ້ນທາງອົງພຣະເຢຊູຄຣິດເຈົ້າ. ເບິ່ງຜົນສະທ້ອນຈາກສີ່ຄຳຖາມຂ້າງເທິງນັ້ນຖ້າປ່ຽນຄຳເວົ້າໃນທາງກົງກັນຂ້າມຈະອອກມາດັ່ງນີ້; ຖ້າບໍ່ມີຜູ້ຮັບໃຊ້ໃນວຽກງານການປະກາດ, ກໍບໍ່ມີຜູ້ໃດຈະປະກາດຂ່າວປະເສີດ. ຖ້າຜູ້ທີ່ເຊື່ອບໍ່ປະກາດຂ່າວປະເສີດ, ຄົນບາບທັງຫລາຍກໍບໍ່ໄດ້ຍິນເຣື່ອງພຣະຄຣິດ. ຖ້າຄົນບາບທັງຫລາຍບໍ່ໄດ້ຍິນເຣື່ອງຂ່າວປະເສີດ, ເຂົາເຈົ້າກໍຈະບໍ່ມີຄວາມເຊື່ອໃນພຣະເຢຊູ. ຖ້າຜູ້ຫລົງເສັຽບໍ່ເຊື່ອໃນອົງພຣະເຢຊູ,ເຂົາເຈົ້າຈະບໍ່ຮ້ອງອອກພຣະນາມພຣະອົງ. ຖ້າເຂົາເຈົ້າບໍ່ຮ້ອງອອກພຣະນາມພຣະອົງ, ເຂົາເຈົ້າກໍຈະບໍ່ໄດ້ຮັບຄວາມລອດພົ້ນ.

ຖ້ອຍຄຳທີ່ວ່າ**ໄດ້ຍິນ**ແລະ**ໄດ້ຟັງ** ແມ່ນອີງໃສ່ການຍອມເຊື່ອຟັງບໍ່ພຽງແຕ່ໄດ້ຍິນຄຳເວົ້າເທົ່ານັ້ນ. ໃນຂໍ້ທີ 14 ໄດ້ເວົ້າເຖິງໂອກາດທີ່ຈະໄດ້ຮຽນຮູ້ເຣື່ອງຂ່າວປະເສີດ.

ການ**ປະກາດ**ຂ່າວປະເສີດແມ່ນສິດພິເສດແລະເປັນຄວາມຮັບຜິດຊອບຂອງຜູ້ທີ່ເຊື່ອທຸກຄົນ. ພວກເຮົາບໍ່ຄວນຢ້ານໃນການປະກາດຂ່າວປະເສີດ. **ຕີນຂອງພວກທີ່ນຳຂ່າວດີມາກໍງົດງາມປານໃດໜໍ** ນີ້ແມ່ນຄຳເວົ້າຂອງບັນດາຜູ້ທີ່ຕ້ອງການຄວາມລອດພົ້ນ. ພວກເຮົາຕ້ອງແບ່ງປັນຂ່າວປະເສີດດ້ວຍໃຈກ້າຫານໂດຍຕັ້ງຄວາມຫວັງໄວ້ວ່າ ຄົນທັງຫລາຍຈະໄດ້ຍິນ, ໄດ້ເຊື່ອ, ໄດ້ຮ້ອງອອກພຣະນາມ, ແລະໄດ້ຮັບຄວາມລອດພົ້ນ. ຜູ້ທີ່ເຊື່ອຕ້ອງສົ່ງຄົນອອກໄປເພື່ອບອກຄົນທັງຫລາຍວ່າຄວາມລອດພົ້ນແມ່ນມີມາໂດຍທາງພຣະເຢຊູເທົ່ານັ້ນ.

## ບົດຮຽນຊີວິດ

ແມ່ນຫຍັງຈະເປັນສິ່ງທີ່ຊ່ອຍພວກເຮົາໃຫ້ປັບປຸງພັທນາຄວາມຮ້ອນຮົນໃຈທີ່ຈະອອກໄປບອກຄົນທັງຫລາຍເຣື່ອງພຣະເຢຊູ?

- ຍອມຮັບວ່າ ພຣະເຢຊູຊົງເປັນທີ່ນໃຫ້ຄົນທັງຫລາຍຕຳສະດຸດ ເຂົາເຈົ້າຈະບໍ່ພົບພຣະເຢຊູດ້ວຍຕົນເອງ ເວັ້ນເສັຽແຕ່ວ່າມີຄົນອອກໄປບອກເຂົາເຈົ້າ
- ມີຄວາມເຂົ້າໃຈຣະຫວ່າງຄວາມຮ້ອນຮົນໃຈກັບຄວາມເຊື່ອອັນແທ້ຈິງທີ່ອົງພຣະເຢຊູຊົງເປັນ ຮາກຖານ
- ຮູ້ເຣື່ອງຄວາມລອດພົ້ນທາງຄວາມເຊື່ອ-ເຊື່ອພຣະເຢຊູຈາກໃຈວ່າພຣະຄຣິດຊົງຕາຍແລະເປັນຄືນມາໃໝ່ ແລະຕັດສິນໃຈທີ່ຈະດຳລົງຊີວິດເພື່ອພຣະອົງ
- ຍອມຮັບໜ້າທີ່ຂອງເຮົາໃນແຜນການຄວາມລອດພົ້ນຂອງພຣະເຈົ້າ-ເປັນຜູ້ນຳຂ່າວປະເສີດຂອງພຣະອົງອອກໄປ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by PS**